ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 346 /ລບ
ນະຄອນຫຼວງວຽງຈັນ, ວັນທີ 01.11.2022

# ດຳລັດ
# ວ່າດ້ວຍ ນະໂຍບາຍລາຄານ້ຳປະປາ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍນ້ຳປະປາ ສະບັບເລກທີ 04/ສປຊ, ລົງວັນທີ 09 ກໍລະກົດ 2009;
- ອີງຕາມ ໜັງສືສະເໜີຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 526/ຍທຂ, ລົງວັນທີ 05 ກັນຍາ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານນະໂຍບາຍລາຄານ້ຳປະປາ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມເປັນທຳ ແນໃສ່ຮັບປະກັນການສົ່ງເສີມການລົງທຶນ ຂອງລັດ, ເອກະຊົນ ແລະ ຕ່າງປະເທດ, ໃຫ້ຜູ້ໃຊ້ບໍລິການໄດ້ຊົມໃຊ້ນ້ຳປະປາຢ່າງພຽງພໍ ແລະ ລາຄາທີ່ເປັນທຳ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ນະໂຍບາຍລາຄານ້ຳປະປາ**

ນະໂຍບາຍລາຄານ້ຳປະປາ ແມ່ນ ການວາງລາຄານ້ຳປະປາ ທີ່ສົມເຫດສົມຜົນ ເພື່ອໃຫ້ຜູ້ບໍລິການນ້ຳປະປາສາມາດດຳເນີນທຸລະກິດຢ່າງມີປະສິດທິຜົນ, ຍືນຍົງ ແລະ ໃຫ້ທຸກຄົນສາມາດໄດ້ຊົມໃຊ້ນ້ຳປະປາ ທີ່ຮັບປະກັນ ທາງດ້ານປະລິມານ, ຄຸນນະພາບ ແລະ ສາມາດຈ່າຍຄ່າບໍລິການນ້ຳປະປາໄດ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຄງສ້າງລາຄານ້ຳປະປາ** ໝາຍເຖິງ ອັດຕາສ່ວນ ລະຫວ່າງ ລາຍຈ່າຍທັງໝົດ ຂອງຕົ້ນທຶນການຜະລິດ ແລະ ການບໍລິການນ້ຳປະປາ ຕໍ່ບໍລິມາດນ້ຳຂາຍ;

2. **ລູກຄ້າປະເພດຄົວເຮືອນ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ຊົມໃຊ້ນ້ຳປະປາ ພາຍໃນທີ່ຢູ່ອາໄສ ເພື່ອດຳລົງຊີວິດ ຕາມວັດຖຸປະສົງ ເປັນຕົ້ນ ປຸງແຕ່ງອາຫານ, ດື່ມ, ອາບ, ຊັກລ້າງ, ລ້ຽງສັດ;

3. **ລູກຄ້າປະເພດນອກຄົວເຮືອນ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ໃຊ້ນ້ຳປະປາ ຢູ່ນອກຄົວເຮືອນ ເພື່ອດຳລົງຊີວິດ ແລະ ສ້າງເສດຖະກິດ-ສັງຄົມ ຕາມວັດຖຸປະສົງ ຊຶ່ງລວມມີ 2 ປະເພດຄື: ລູກຄ້າປະເພດ ສຳນັກງານ, ອົງການ ຂອງລັດ, ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ແລະ ລູກຄ້າປະເພດທຸລະກິດ;

4. **ລາຄາກຸ້ມທຶນ** ໝາຍເຖິງ ລາຄາຕົ້ນທຶນຂອງການຜະລິດ ແລະ ການບໍລິການ ນ້ຳປະປາ ທີ່ປົກຄຸມຄ່າໃຊ້ຈ່າຍໄດ້ທັງໝົດ.

5. **ຜູ້ໃຊ້ບໍລິການນ້ຳປະປາ ປະເພດ ສຳນັກງານ, ອົງການ ຂອງລັດ, ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ** ໝາຍເຖິງ ສຳນັກງານ, ສະຖານທີ່ສາທາລະນະ, ສະຖານການສຶກສາ, ໂຮງໝໍ, ຫໍປະຊຸມ, ວັດ, ໂບດ, ສຸບພີກ, ເຮືອນຮັບຕ້ອນ, ສຳນັກງານຜູ້ຕາງໜ້າກົງສູນ, ສຳນັກງານຜູ້ຕາງໜ້າການທູດ, ສຳນັກງານອົງການຈັດຕັ້ງສາກົນ ແລະ ອື່ນໆ.

6. **ຜູ້ໃຊ້ບໍລິການນ້ຳປະປາ ປະເພດທຸລະກິດ** ໝາຍເຖິງ ຜູ້ໃຊ້ນ້ຳໃນ ສະຖານການສຶກສາເອກະຊົນ, ໂຮງໝໍເອກະຊົນ, ຜູ້ດຳເນີນທຸລະກິດການຄ້າ ແລະ ການບໍລິການ, ຮ້ານອາຫານ, ຮ້ານກິນດື່ມ, ສະຖານບັນເທີງ, ພັດຕະຄານ, ໂຮງແຮມ, ເຮືອນພັກ, ໂຮງງານ ແລະ ອຸດສາຫະກຳປຸງແຕ່ງ, ປ້ຳນ້ຳມັນ ແລະ ອື່ນໆ ທີ່ມີໃບທະບຽນວິສາຫະກິດ.

### ມາດຕາ 4 ຫຼັກການກ່ຽວກັບວຽກງານນະໂຍບາຍລາຄານ້ຳປະປາ

ການເຄື່ອນໄຫວວຽກງານນະໂຍບາຍລາຄານ້ຳປະປາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການພັດທະນານ້ຳປະປາ ແລະ ສຸຂາພິບານ ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງລັດຖະບານ;
2. ຮັບປະກັນການບໍລິການນ້ຳປະປາ ໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ, ທັນສະໄໝ, ໂປ່ງໃສ, ກວດສອບໄດ້, ໄດ້ມາດຕະຖານ ແລະ ເປັນມິດກັບສິ່ງແວດລ້ອມ;
3. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງວຽກງານນະໂຍບາຍລາຄານ້ຳປະປາ.

### ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານນະໂຍບາຍລາຄານ້ຳປະປາ ຢູ່ ສປປ ລາວ.

## ໝວດທີ 2
## ພື້ນຖານການກຳນົດຄ່າບໍລິການນ້ຳປະປາ

### ມາດຕາ 6 ຂອບເຂດການກຳນົດໂຄງສ້າງລາຄານ້ຳປະປາ

ການກຳນົດໂຄງສ້າງລາຄານ້ຳປະປາ ເພື່ອເປັນພື້ນຖານກຳນົດຄ່າບໍລິການນ້ຳປະປາ ໃນການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດລາຄານ້ຳປະປາ ແລະ ການຄິດໄລ່ດ້ານລາຄານ້ຳປະປາ ທີ່ເປັນການສົ່ງເສີມຄວາມຍຸຕິທຳ ເພື່ອໃຫ້ຜູ້ຊົມໃຊ້ນ້ຳປະປາ ສາມາດເຂົ້າເຖິງການບໍລິການ ໃນລາຄາທີ່ທຸກຄົນສາມາດຈ່າຍໄດ້ ແລະ ຜູ້ບໍລິການນ້ຳປະປາ ສາມາດເສີມສ້າງຄວາມອາດສາມາດທາງດ້ານການເງິນ ດ້ວຍການເກັບກູ້ທຶນຄືນ ແລະ ສາມາດສ້າງກຳໄລ ຕາມສັດສ່ວນທີ່ເໝາະສົມຫຼາຍກວ່າ ຫ້າ ສ່ວນຮ້ອຍ (>5%).

ກະຊວງ ໂຍທາທິການ ແລະ ຂົນສົ່ງ ກຳນົດໂຄງສ້າງລາຄານ້ຳປະປາ ໂດຍໃຫ້ລະບຸທຸກໆລາຍການຂໍ້ມູນຈຳເປັນທີ່ຕ້ອງການ ສຳລັບ ການຄິດໄລ່ລາຄານ້ຳປະປາ, ດຳເນີນການປະເມີນຜົນ ແລະ ທົບທວນລາຄານ້ຳປະປາ ທຸກໆ ສາມປີ ຫຼື ຫ້າປີ.

**ມາດຕາ 7 ການນຳໃຊ້ໂຄງສ້າງລາຄາດຽວ**

ຜູ້ບໍລິການນ້ຳປະປາ ຕ້ອງນຳໃຊ້ໂຄງສ້າງລາຄານ້ຳປະປາດຽວກັນ ແບບເອກະພາບທຸກພື້ນທີ່ບໍລິການ ໃນທົ່ວແຂວງ, ນະຄອນຫຼວງວຽງຈັນ ທີ່ຕົນຮັບຜິດຊອບ ເພື່ອເປັນການຊ່ວຍໜູນດ້ານລາຄາ ຈາກພື້ນທີ່ບໍລິການທີ່ມີລາຍຮັບສູງ ໃຫ້ແກ່ພື້ນທີ່ບໍລິການທີ່ມີລາຍຮັບຕ່ຳ.

**ມາດຕາ 8 ປະເພດຜູ້ໃຊ້ບໍລິການນ້ຳປະປາ**

ປະເພດຂອງຜູ້ຊົມໃຊ້ນ້ຳປະປາ ແບ່ງອອກເປັນ 2 ປະເພດ ຄື: ຜູ້ຊົມໃຊ້ນ້ຳປະປາປະເພດຄົວເຮືອນ ແລະ ຜູ້ຊົມໃຊ້ນ້ຳປະປາປະເພດນອກຄົວເຮືອນ;

ຜູ້ໃຊ້ບໍລິການນ້ຳປະປາ ປະເພດຄົວເຮືອນ ແມ່ນ ຜູ້ຊົມໃຊ້ນ້ຳໃນຄົວເຮືອນ ຫຼື ທີ່ພັກພາອາໄສສ່ວນຕົວ ຊຶ່ງລວມມີ ປະຊາຊົນ, ຊາວຕ່າງດ້າວ, ພະນັກງານ, ທະຫານ ແລະ ຕຳຫຼວດ;

ຜູ້ໃຊ້ບໍລິການນ້ຳປະປາປະເພດນອກຄົວເຮືອນ ແມ່ນ ຜູ້ຊົມໃຊ້ປະເພດ ສຳນັກງານ, ອົງການຂອງລັດ,ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ແລະ ຜູ້ຊົມໃຊ້ນ້ຳປະເພດທຸລະກິດ.

**ມາດຕາ 9 ໂຄງສ້າງລາຄານ້ຳປະປາ ສຳລັບ ລູກຄ້າປະເພດຄົວເຮືອນ**

ເພື່ອເປັນການຊ່ວຍໜູນດ້ານລາຄາ ຈາກຄົວເຮືອນທີ່ມີລາຍຮັບສູງ ໃຫ້ແກ່ຄົວເຮືອນທີ່ມີລາຍຮັບຕ່ຳ, ຜູ້ບໍລິການນ້ຳປະປາ ຕ້ອງນຳໃຊ້ໂຄງສ້າງລາຄານ້ຳປະປາ ທີ່ເພີ່ມຂຶ້ນຕາມບໍລິມາດການຊົມໃຊ້ນ້ຳປະປາ ໂດຍກຳນົດຂອບເຂດປະລິມານຂອງການນຳໃຊ້ນ້ຳເປັນແມັດກ້ອນຕໍ່ເດືອນ ອອກເປັນ ສາມ ຂັ້ນ ຄື: ແຕ່ ສູນ ຫາ ເຈັດ ແມັດກ້ອນ, ແຕ່ ແປດ ຫາ ສິບຫ້າ ແມັດກ້ອນ ແລະ ຫຼາຍກວ່າ ສິບຫ້າ ແມັດກ້ອນ.

**ມາດຕາ 10 ໂຄງສ້າງລາຄານ້ຳປະປາ ສຳລັບ ລູກຄ້າປະເພດນອກຄົວເຮືອນ**

ຜູ້ບໍລິການນ້ຳປະປາ ຕ້ອງນຳໃຊ້ໂຄງສ້າງລາຄານ້ຳປະປາແບບຄົງທີ່ ຕາມການເພີ່ມຂຶ້ນຂອງບໍລິມາດການຊົມໃຊ້ນ້ຳປະປາ ສຳລັບ ລູກຄ້າປະເພດນອກຄົວເຮືອນ.

**ມາດຕາ 11 ລາຄານ້ຳປະປາ ສຳລັບ ລູກຄ້າປະເພດຄົວເຮືອນ**

ຜູ້ບໍລິການນ້ຳປະປາ ຕ້ອງກຳນົດລາຄານ້ຳປະປາ ເພື່ອໃຫ້ຜູ້ໃຊ້ບໍລິການນ້ຳປະປາ ສາມາດຊຳລະຄ່າບໍລິການນ້ຳປະປາໄດ້ ຢູ່ໃນລະຫວ່າງ ສາມ ຫາ ຫ້າ ສ່ວນຮ້ອຍ (3-5%) ຂອງລາຍຮັບສະເລ່ຍຂອງຄົວເຮືອນ. ພື້ນຖານການກຳນົດລາຍຮັບຄົວເຮືອນທີ່ມີລາຍຮັບຕ່ຳ ແມ່ນອີງຕາມ ແຈ້ງການແນະນຳກ່ຽວກັບ ການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ສຳລັບ ຜູ້ອອກແຮງງານຢູ່ ສປປ ລາວ ແຕ່ລະໄລຍະ.

**ມາດຕາ 12 ລາຄານ້ຳປະປາສຳລັບລູກຄ້າປະເພດ ສຳນັກງານ, ອົງການ ຂອງລັດ, ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ**

ຜູ້ບໍລິການນ້ຳປະປາ ຕ້ອງນຳໃຊ້ລາຄານ້ຳປະປາແບບຄົງທີ່ ສຳລັບ ຜູ້ໃຊ້ບໍລິການນ້ຳປະປາປະເພດສຳນັກງານ, ອົງການຂອງລັດ, ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ໂດຍໃຫ້ມີການຊ່ວຍໜູນດ້ານລາຄາແກ່ຜູ້ໃຊ້ບໍລິການນ້ຳປະປາປະເພດຄົວເຮືອນ ດ້ວຍການກຳນົດລາຄາບໍ່ໃຫ້ເກີນ ສອງ ເທົ່າ ຂອງລາຄາທີ່ໄດ້ກຳນົດສຳລັບ ຂອບເຂດບໍລິມາດການຊົມໃຊ້ນ້ຳໃນຂັ້ນຕ່ຳສຸດ ຂອງລູກຄ້າປະເພດຄົວເຮືອນ ແຕ່ ສູນ ຫາ ເຈັດ ແມັດກ້ອນ.

## ມາດຕາ 13 ລາຄານ້ຳປະປາ ສຳລັບ ລູກຄ້າປະເພດທຸລະກິດ

ຜູ້ບໍລິການນ້ຳປະປາ ຕ້ອງນຳໃຊ້ລາຄານ້ຳປະປາແບບຄົງທີ່ ສຳລັບ ຜູ້ໃຊ້ບໍລິການນ້ຳປະປາປະເພດທຸລະກິດ ໂດຍໃຫ້ມີການຊ່ວຍໜູນດ້ານລາຄາແກ່ຜູ້ໃຊ້ບໍລິການນ້ຳປະປາປະເພດຄົວເຮືອນ ດ້ວຍການກຳນົດບໍ່ໃຫ້ເກີນ ສາມ ເທົ່າ ຂອງລາຄາທີ່ໄດ້ກຳນົດ ສຳລັບ ຂອບເຂດບໍລິມາດການຊົມໃຊ້ນ້ຳໃນຂັ້ນຕ່ຳສຸດ ຂອງລູກຄ້າປະເພດຄົວເຮືອນແຕ່ ສູນ ຫາ ເຈັດ ແມັດກ້ອນ.

## ມາດຕາ 14 ການສ້າງສິ່ງຈູງໃຈ

ຜູ້ບໍລິການນ້ຳປະປາ ຕ້ອງປັບປຸງຄຸນນະພາບຂອງການບໍລິການ ເພື່ອໃຫ້ຜູ້ໃຊ້ບໍລິການນ້ຳປະປາ ມີຄວາມເພິ່ງພໍໃຈກັບການບໍລິການ ແລະ ຈ່າຍຄ່າບໍລິການ ທັນຕາມກຳນົດເວລາຂອງໃບເກັບເງິນຄ່າບໍລິການນ້ຳປະປາ.

## ມາດຕາ 15 ການຫຼຸດລາຄານ້ຳປະປາ

ຜູ້ບໍລິການນ້ຳປະປາ ອາດຈະຫຼຸດລາຄານ້ຳປະປາ ສຳລັບ ລູກຄ້າປະເພດຄົວເຮືອນ ໃນພື້ນທີ່ບໍລິການໃດໜຶ່ງ ໃຫ້ຕ່ຳກວ່າພື້ນທີ່ບໍລິການອື່ນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ຖ້າຫາກວ່າ:

1. ຄຸນນະພາບຂອງການບໍລິການຢູ່ໃນພື້ນທີ່ບໍລິການ ຫຼື ຄວາມເພິ່ງພໍໃຈຂອງລູກຄ້າຕໍ່ກັບການບໍລິການທີ່ຕ່ຳລົງ;
2. ມີຄວາມຈຳເປັນ ເພື່ອໃຫ້ຜູ້ໃຊ້ບໍລິການນ້ຳປະປາປະເພດຄົວເຮືອນ ໃນພື້ນທີ່ບໍລິການນັ້ນ ສາມາດຈ່າຍໄດ້;
3. ເກີດໄພພິບັດທາງທຳມະຊາດ, ການລະບາດຂອງເຊື້ອພະຍາດ ທີ່ກະທົບຕໍ່ຊີວິດການເປັນຢູ່ ຂອງຜູ້ໃຊ້ບໍລິການນ້ຳປະປາ ໃນພື້ນທີ່ບໍລິການນັ້ນ;
4. ຕົວເລກໃນໝໍ້ແທກນ້ຳ ມີຄ່າເພີ່ມຂຶ້ນ ແຕ່ ປະລິມານການຊົມໃຊ້ນ້ຳມີໜ້ອຍ ຍ້ອນມີແຕ່ແຮງດັນລົມໃນລະບົບສາຍທໍ່ ແລະ ປະລິມານນ້ຳບໍ່ພຽງພໍ ຫຼື ອັດຕາການໄຫຼບໍ່ຕໍ່ເນື່ອງ.

ການຫຼຸດລາຄານ້ຳປະປາ ຕາມເງື່ອນໄຂທີ່ໄດ້ກ່າວມາຂ້າງເທິງນັ້ນ, ຜູ້ບໍລິການນ້ຳປະປາ ຕ້ອງຮັບປະກັນໄດ້ການຊ່ວຍໜູນດ້ານລາຄາ ຈາກພື້ນທີ່ບໍລິການອື່ນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

## ມາດຕາ 16 ການນຳໃຊ້ໝໍ້ແທກນ້ຳ

ຜູ້ບໍລິການນ້ຳປະປາ ຕ້ອງເປັນຜູ້ຕິດຕັ້ງໝໍ້ແທກນ້ຳ ແລະ ຜູ້ໃຊ້ບໍລິການນ້ຳປະປາ ຕ້ອງຊົມໃຊ້ນ້ຳປະປາໂດຍຜ່ານໝໍ້ແທກນ້ຳ ແລະ ຊຳລະຄ່າບໍລິການນ້ຳປະປາ ລວມທັງອາກອນ ຕາມບໍລິມາດນ້ຳທີ່ໄດ້ຊົມໃຊ້ ເພື່ອສົ່ງເສີມຄວາມເປັນທຳ ແລະ ການຊົມໃຊ້ນ້ຳປະປາຢ່າງປະຢັດ.

## ມາດຕາ 17 ຄ່າບຸລະນະຮັກສາໝໍ້ແທກນ້ຳ

ຜູ້ບໍລິການນ້ຳປະປາ ເປັນຜູ້ຄຸ້ມຄອງໝໍ້ແທກນ້ຳ ຂອງຜູ້ໃຊ້ບໍລິການນ້ຳປະປາທັງໝົດ. ສະນັ້ນ, ຜູ້ບໍລິການນ້ຳປະປາ ຕ້ອງຍົກເລີກການເກັບຄ່າບຸລະນະຮັກສາໝໍ້ແທກນ້ຳ. ໃນກໍລະນີ ມີການປ່ຽນແທນໝໍ້ແທກນ້ຳໃໝ່ ຜູ້ບໍລິການນ້ຳປະປາ ຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

## ມາດຕາ 18 ລາຄາຕິດຕັ້ງທໍ່ນ້ຳເຂົ້າໃໝ່

ຜູ້ບໍລິການນ້ຳປະປາ ຕ້ອງກຳນົດລາຄາຕິດຕັ້ງທໍ່ນ້ຳເຂົ້າໃໝ່ ຈາກຕາຂ່າຍນ້ຳປະປາ ຫາບໍລິເວນທີ່ດິນຂອງລູກຄ້າ ໂດຍນຳໃຊ້ລາຄາຫົວໜ່ວຍວຽກງານກໍ່ສ້າງ ແລະ ປັບປຸງລະບົບນ້ຳປະປາ ຫຼື ກຳນົດລາຄາທີ່ບໍ່ເປັນການສ້າງກຳໄລຈາກລູກຄ້າ ແລະ ຄວນມີທາງເລືອກໃຫ້ແກ່ລູກຄ້າທີ່ທຸກຍາກຈະຕິດຕັ້ງໝໍ້ແທກນ້ຳໃໝ່ສາມາດຊຳລະເປັນງວດໄດ້ ໃນຊ່ວງໄລຍະເວລາບໍ່ເກີນ ໜຶ່ງ ປີ.

ໃນກໍລະນີ ມີການຍື່ນຄຳຮ້ອງຂໍຕິດຕັ້ງທໍ່ນ້ຳເຂົ້າໃໝ່ ສິບ ຄົວເຮືອນ ຂຶ້ນໄປ ແລະ ມີໄລຍະຫ່າງຂອງແຕ່ລະຄົວເຮືອນ ບໍ່ເກີນ ສິບ ແມັດ ຜູ້ບໍລິການນ້ຳປະປາ ຕ້ອງຂະຫຍາຍຕາຂ່າຍນ້ຳປະປາ ໄປຫາເຂດດັ່ງກ່າວໂດຍການລົງທຶນຂອງຜູ້ບໍລິການນ້ຳປະປາ.

**ມາດຕາ 19 ການຊ່ວຍໜູນຄ່າຕິດຕັ້ງທໍ່ນ້ຳເຂົ້າໃໝ່**

ຄົວເຮືອນທຸກຍາກ ຈະຕ້ອງໄດ້ຮັບການຍົກເວັ້ນຄ່າຕິດຕັ້ງທໍ່ນ້ຳເຂົ້າໃໝ່. ຜູ້ບໍລິການນ້ຳປະປາ ຕ້ອງມີທຶນ, ມີລະບົບໂຄງລ່າງນ້ຳປະປາ ແລະ ປະລິມານນ້ຳປະປາ ທີ່ຮອງຮັບໄດ້ ເພື່ອຊ່ວຍໜູນຄວາມຕ້ອງການທີ່ເພີ່ມຂຶ້ນ ຂອງຄົວເຮືອນທີ່ທຸກຍາກ ຕາມນະໂຍບາຍ.

## ໝວດທີ 3
## ການເກັບກູ້ທຶນຄືນ

**ມາດຕາ 20 ຈຸດປະສົງຂອງການເກັບກູ້ທຶນຄືນ**

ເພື່ອໃຫ້ຜູ້ບໍລິການນ້ຳປະປາ ກຸ້ມຕົນເອງທາງດ້ານການເງິນ ແລະ ມີລາຍຮັບພຽງພໍ ສຳລັບ ຄ່າໃຊ້ຈ່າຍເຂົ້າໃນການດຳເນີນງານ, ບູລະນະຮັກສາລະບົບໂຄງລ່າງນ້ຳປະປາ, ຫຼຸ້ຍຫ້ຽນຊັບສົມບັດຄົງທີ່, ຊຳລະໜີ້ສິນ (ດອກເບ້ຍ ແລະ ຕົ້ນທຶນເງິນກູ້ຢືມ), ສ້າງຄັງສະສົມຕາມລະບຽບການຂອງກະຊວງການເງິນ, ເພື່ອຂະຫຍາຍລະບົບໂຄງລ່າງນ້ຳປະປາ ແລະ ປັບປຸງການບໍລິການຂອງຕົນໃຫ້ດີຂຶ້ນ.

**ມາດຕາ 21 ເປົ້າໝາຍລາຄາກຸ້ມທຶນ ຂອງຜູ້ດຳເນີນທຸລະກິດນ້ຳປະປາ**

ເປົ້າໝາຍລາຄາກຸ້ມທຶນ ຕ້ອງໄດ້ຖືກປັບປຸງໃຫ້ດີຂຶ້ນ ແລະ ຈະສາມາດບັນລຸໄດ້ລາຄາກຸ້ມທຶນໃນໄລຍະກາງ ແລະ ໄລຍະຍາວ. ລາຄາກຸ້ມທຶນຈະຕ້ອງໃຫ້ບັນລຸໄດ້ລະດັບທີ່ຈຳເປັນ ຄື:

1. ພຽງພໍກັບລາຍຈ່າຍ ຄ່າການດຳເນີນງານ, ບູລະນະຮັກສາລະບົບໂຄງລ່າງນ້ຳປະປາ, ດອກເບ້ຍເງິນກູ້ ແລະ ພຽງພໍ ສຳລັບ ການຫັກຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່ໃນ ຂອດການຜະລິດ ແລະ ຂອດການຈຳໜ່າຍ ໂດຍບໍ່ໃຫ້ຄິດໄລ່ຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່ ຂອງຂອດການບໍລິການ ຫຼື ບໍລິຫານເຂົ້າໃສ່ໃນລາຄາກຸ້ມທຶນ;
2. ສາມາດຮັກສາອັດຕາສ່ວນການຊຳລະໜີ້ສິນໄດ້ຫຼາຍກວ່າ 1,2 ເທົ່າ.

**ມາດຕາ 22 ຄັງສະສົມຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່**

ຄັງສະສົມຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່ ແມ່ນການຈັດເກັບຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່ ຕາມສັດສ່ວນທີ່ກຳນົດໄວ້ ໃນກົດໝາຍ ວ່າດ້ວຍອາກອນ ເພື່ອໃຊ້ຈ່າຍເຂົ້າໃນການບູລະນະຮັກສາ ແລະ ປ່ຽນແທນຊັບສິນ.

ເພື່ອຍົກລະດັບຄວາມອາດສາມາດ ໃນການຈັດຫາທຶນສຳຮອງຫຼຸ້ຍຫ້ຽນຊັບສົມບັດຄົງທີ່ ດ້ວຍຕົນເອງ ເພື່ອປ່ຽນແທນຊັບສິນໃນອະນາຄົດ, ຜູ້ບໍລິການນ້ຳປະປາ ຕ້ອງສ້າງ ແລະ ຮັກສາຄັງສະສົມຫຼຸ້ຍຫ້ຽນຊັບສົມບັດຄົງທີ່ໄວ້. ຈຳນວນເງິນທີ່ປະກອບເຂົ້າໃນຄັງສະສົມຫຼຸ້ຍຫ້ຽນຊັບສົມບັດຄົງທີ່ໃນປີ ແມ່ນເງິນທີ່ເຫຼືອຈາກການຫັກທຸກໆຄ່າໃຊ້ຈ່າຍ ສຳລັບ ການປ່ຽນແທນຊັບສິນຄົງທີ່ໃນປີ.

ໃນກໍລະນີ ລາຄານ້ຳປະປາສະເລ່ຍ ທີ່ໄດ້ຮັບອະນຸມັດຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ບໍ່ສາມາດເກັບກູ້ຄ່າຫຼຸ້ຍຫ້ຽນຊັບສິນຄົງທີ່ໄດ້ຄືນທັງໝົດ, ຈຳນວນເງິນທີ່ຈະແບ່ງເຂົ້າຄັງສະສົມຄ່າຫຼຸ້ຍຫ້ຽນ ອາດຈະຫຼຸດລົງຕາມສັດສ່ວນທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດລາຄານ້ຳປະປາ ຕາມການອະນຸມັດ.

ກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອອກບົດແນະນຳກ່ຽວກັບການນຳໃຊ້ເງິນຄັງສະສົມຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່ ໂດຍສົມທົບກັບ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 23 ການສະໜອງທຶນ ເພື່ອການຂະຫຍາຍການບໍລິການ**

ລັດວິສາຫະກິດນ້ຳປະປາ ຈະຕ້ອງຂໍນຂອາຍການປະກອບທຶນ ຈາກຜູ້ພັດທະນາ ຫຼື ຜູ້ໃຫ້ທຶນ ໂດຍຜ່ານຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ນະຄອນຫຼວງວຽງຈັນ ເມື່ອເຫັນວ່າມີຄວາມຈຳເປັນຕ້ອງໄດ້ສ້າງລະບົບໂຄງລ່າງນ້ຳປະປາໃໝ່ ເພື່ອຕອບສະໜອງຄວາມຕ້ອງການເພີ່ມເຕີມຂອງການພັດທະນາ ຕາມທີ່ໄດ້ນຳສະເໜີ.

**ມາດຕາ 24 ຜົນຕອບແທນທີ່ອະນຸຍາດ**

ຜູ້ບໍລິການນ້ຳປະປາ ມີສິດໄດ້ຮັບຜົນຕອບແທນທີ່ເປັນທຳຕໍ່ກັບການເຄື່ອນໄຫວດຳເນີນທຸລະກິດຂອງຕົນ ຕາມລະບຽບການ.

## ໝວດທີ 4
## ການກຳນົດລາຄານ້ຳປະປາ

**ມາດຕາ 25 ໄລຍະເວລາຂອງການທົບທວນລາຄານ້ຳປະປາ**

ການດັດປັບລາຄານ້ຳປະປາ ສຳລັບ ຜູ້ດຳເນີນທຸລະກິດນ້ຳປະປາ ຈະຕ້ອງອີງໃສ່ການທົບທວນລາຄານ້ຳປະປາ ທີ່ໄດ້ດຳເນີນໃນທຸກໆ ສາມປີ ຫຼື ຫ້າປີ ຂອງຂະແໜງການນ້ຳປະປາ ທີ່ໄດ້ຜ່ານການຮັບຮອງ ຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ແລະ ສຸຂາພິບານ.

**ມາດຕາ 26 ຂັ້ນຕອນໃນການກຳນົດລາຄານ້ຳປະປາ**

ຜູ້ດຳເນີນທຸລະກິດນ້ຳປະປາ ເປັນຜູ້ກຳນົດລະດັບລາຄານ້ຳປະປາ ໂດຍໃຫ້ສອດຄ່ອງ ກັບບົດແນະນຳກ່ຽວກັບ ການກຳນົດໂຄງສ້າງລາຄານ້ຳປະປາ ພ້ອມດ້ວຍແຜນດຳເນີນທຸລະກິດ ເພື່ອໃຫ້ພາກສ່ວນທີ່ມີສິດຮັບຮອງເອົາລາຄານ້ຳປະປາ ຊ່ວຍຄົ້ນຄວ້າປະກອບຄຳເຫັນ; ແຜນດຳເນີນທຸລະກິດ ຈະຕ້ອງໃຫ້ເຫດຜົນທີ່ເໝາະສົມ, ຊັດເຈນ ແລະ ສາມາດປະເມີນຜົນປະສິດທິພາບຂອງການດຳເນີນງານໄດ້ຮອບດ້ານ ສຳລັບການສະເໜີດັດປັບລາຄານ້ຳປະປາ.

ກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອອກບົດແນະນຳສຳລັບການກຳນົດໂຄງສ້າງລາຄານ້ຳປະປາ ແລະບົດແນະນຳການສ້າງແຜນດຳເນີນທຸລະກິດນ້ຳປະປາ ໂດຍສົມທົບກັບ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 27 ຂັ້ນຕອນ ສຳລັບ ການທົບທວນ ແລະ ການອະນຸມັດລາຄານ້ຳປະປາ**

ບົດກຳນົດໂຄງສ້າງລາຄາ ແລະ ລະດັບລາຄານ້ຳປະປາ ພ້ອມດ້ວຍແຜນດຳເນີນທຸລະກິດ ສະເໜີຜ່ານພະແນກໂຍທາທິການ ແລະ ຂົນສົ່ງ ແລ້ວນຳສະເໜີຫາສະພາບໍລິຫານລັດວິສາຫະກິດນ້ຳປະປາ ເພື່ອຄົ້ນຄ້ວາມີຄຳເຫັນ ຈາກນັ້ນ ນຳເອົາບົດກຳນົດລາຄານ້ຳປະປາ, ແຜນດຳເນີນທຸລະກິດ ພ້ອມທັງຄຳເຫັນ ຂອງສະພາບໍລິຫານລັດວິສາຫະກິດ ແລ້ວຈຶ່ງນຳສົ່ງໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ ຮັບຮອງ ແລ້ວຈຶ່ງນຳສົ່ງໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ລົງລາຍເຊັນ;

ໃນກໍລະນີຈຳເປັນ ສະພາບໍລິຫານລັດວິສາຫະກິດນ້ຳປະປາ ສາມາດນຳເອົາບົດກຳນົດລາຄານ້ຳປະປາ, ແຜນດຳເນີນທຸລະກິດ ພ້ອມທັງຄຳເຫັນ ສະເໜີຫາ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເພື່ອຊ່ວຍຄົ້ນຄວ້າ ແລ້ວແຈ້ງຕອບສະພາບໍລິຫານລັດວິສາຫະກິດນ້ຳປະປາ ແລ້ວສະພາບໍລິຫານລັດວິສາຫະກິດນ້ຳປະປາ ຈຶ່ງນຳສົ່ງໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ ຮັບຮອງ ແລ້ວຈຶ່ງນຳສົ່ງໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ລົງລາຍເຊັນ.

**ມາດຕາ 28 ບັນດາປັດໄຈ ທີ່ຕ້ອງໄດ້ພິຈາລະນາ ສຳລັບ ການກຳນົດລາຄານ້ຳປະປາ**

ຂະບວນການກຳນົດລາຄານ້ຳປະປາ ຄວນຄຳນຶງເຖິງ ບັນດາຈຸດພິເສດຂອງແຕ່ລະພື້ນທີ່ບໍລິການ ເຊັ່ນ: ຂະໜາດ, ຄວາມຫ່າງໄກສອກຫຼີກ, ສະພາບທາງດ້ານພູມສາດ ແລະ ຂໍ້ຈຳກັດ ທາງດ້ານໂຄງລ່າງພື້ນຖານ;

ລາຄານ້ຳປະປາ ຕ້ອງອີງໃສ່ຜົນການເຄື່ອນໄຫວທຸລະກິດ ແລະ ຂໍ້ມູນດ້ານຜົນການປະຕິບັດງານ ຢ່າງໜ້ອຍ 3 ປີ ຫຼື 5 ປີ ຄືນຫຼັງ ແລະ ຈະຕ້ອງສະແດງໃຫ້ເຫັນຂະບວນການປັບປຸງປະສິດທິພາບ ແລະ ສະໜອງການບໍລິການນ້ຳປະປາຢ່າງຕໍ່ເນື່ອງ. ຄາດໝາຍສູ້ຊົນໃນການພິຈາລະນາ ສຳລັບ ການກຳນົດລາຄານ້ຳປະປາ ຈະຕ້ອງສົມເຫດສົມຜົນ ແລະ ສາມາດບັນລຸໄດ້.

**ມາດຕາ 29 ການປັບປຸງລາຄານ້ຳປະປາ ຕ້ອງມີການເຊື່ອມໂຍງກັບຜົນການປະຕິບັດງານ**

ການອະນຸມັດລາຄານ້ຳປະປາ ໃຫ້ຜູ້ບໍລິການນ້ຳປະປາ ຕ້ອງຕອບສະໜອງໄດ້ບັນດາເງື່ອນໄຂ: ບັນລຸໄດ້ຄາດໝາຍສູ້ຊົນທີ່ພົວພັນເຖິງການປັບປຸງ ການບໍລິການ, ປະສິດທິພາບ ແລະ ປະສິດທິຜົນທາງດ້ານເຕັກນິກ ແລະ ການເງິນ ໃຫ້ດີຂຶ້ນ ແລະ ມີຄວາມເປັນທຳ.

**ມາດຕາ 30 ຜົນໄດ້ຮັບຈາກການທົບທວນລາຄານ້ຳປະປາ**

1. ການກຳນົດລາຄານ້ຳປະປາສະເລ່ຍ ເປັນກົບຕໍ່ແມັດກ້ອນ ສຳລັບ ແຕ່ລະປີ ຂອງຊ່ວງໄລຍະຂອງການທົບທວນການຈັດຕັ້ງປະຕິບັດລາຄານ້ຳປະປາຂອງຜູ້ດຳເນີນທຸລະກິດນ້ຳປະປາທຸກ ສາມປີ ຫາ ຫ້າປີ;

2. ບົດສະຫຼຸບສັງລວມຄາດໝາຍສູ້ຊົນເພື່ອ: ການບໍລິການທີ່ດີຂຶ້ນ, ປັບປຸງປະສິດທິພາບ ແລະ ປະສິດທິຜົນທາງດ້ານເຕັກນິກ, ການເກັບກູ້ທຶນຄືນ ແລະ ສາມາດສ້າງກຳໄລໄດ້.

ກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ເຜີຍແຜ່ບົດທົບທວນລາຄານ້ຳປະປາຂອງຕົນ ໃນບົດລາຍງານປະຈຳປີ ຂອງຂະແໜງນ້ຳປະປາ ທີ່ໄດ້ເປີດເຜີຍຕໍ່ສາທາລະນະໃນແຕ່ລະປີ. ຜູ້ບໍລິການນ້ຳປະປາ ມີຄວາມຮັບຜິດຊອບ ໃນການກຳນົດລາຄານ້ຳປະປາ ລະອຽດ ສຳລັບ ແຕ່ລະປະເພດຜູ້ໃຊ້ບໍລິການນ້ຳປະປາ ໂດຍໃຫ້ສອດຄ່ອງກັບການອະນຸມັດລາຄານ້ຳປະປາສະເລ່ຍ.

**ມາດຕາ 31 ການດັດປັບລາຄານ້ຳປະປາ**

ການດັດປັບລາຄານ້ຳປະປາ ແມ່ນ ການປ່ຽນແປງລາຄານ້ຳປະປາ ໃນແຕ່ລະໄລຍະ ບົນພື້ນຖານຕົ້ນທຶນການຜະລິດ ແລະ ການບໍລິການຕົວຈິງ ຕາມໂຄງສ້າງລາຄານ້ຳປະປາ, ຊຶ່ງອາດຈະມີການປັບຂຶ້ນລາຄາ ຫຼື ປັບລົງລາຄາ ຕາມກົນໄກເສດຖະກິດຕະຫຼາດ ຫຼື ການນຳເອົາມູນຄ່າຂອງໂຄງການກໍ່ສ້າງລະບົບໂຄງລ່າງນ້ຳປະປາໃໝ່ເຂົ້ານຳ;

ນະໂຍບາຍລາຄານ້ຳປະປາ ສະບັບນີ້ ສະໜັບສະໜູນຂະບວນການດັດປັບລາຄານ້ຳປະປາທີ່ໝັ້ນຄົງ ແລະ ສະໝ່ຳສະເໝີ ເພື່ອໃຫ້ລາຄານ້ຳປະປາ ເໝາະສົມ ແລະ ຜູ້ໃຊ້ບໍລິການນ້ຳປະປາ ມີເວລາທີ່ຈະຊຳລະຄ່າຊົມໃຊ້ນ້ຳປະປາໄດ້.

**ມາດຕາ 32 ການຄຸ້ມຄອງຊັບສິນ**

ຜູ້ບໍລິການນ້ຳປະປາ ຕ້ອງສ້າງແຜນເພື່ອຄຸ້ມຄອງຊັບສິນຂອງຕົນ ເປັນຕົ້ນ ຊັບສິນປະເພດ ສິ່ງປຸກສ້າງ, ອຸປະກອນກົນຈັກ-ເຄື່ອງໄຟຟ້າ ແລະ ຕາຂ່າຍທໍ່ນ້ຳປະປາ. ບັນດາແຜນດັ່ງກ່າວ ຕ້ອງນຳໃຊ້ເງິນທີ່ໄດ້ມາຈາກການເກັບຄ່າຫຼຸ້ຍຫ້ຽນເຂົ້າຄັງສະສົມຄ່າຫຼຸ້ຍຫ້ຽນ ເພື່ອປ່ຽນແທນ ຫຼື ບູລະນະຊັບສິນ ປະເພດ ສິ່ງປຸກສ້າງ, ອຸປະກອນກົນຈັກ-ເຄື່ອງໄຟຟ້າ ແລະ ຕາຂ່າຍທໍ່ນ້ຳປະປາໃນອະນາຄົດ ເມື່ອໝົດອາຍຸການນຳໃຊ້ ເທົ່ານັ້ນ.

**ມາດຕາ 33 ການຕິດຕາມປະເມີນຜົນ ແລະ ການລາຍງານ**

ພາຍຫຼັງການອະນຸມັດ ໃຫ້ມີການປັບປຸງລາຄານ້ຳປະປາ; ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຕິດຕາມປະເມີນຜົນ ແລະ ລາຍງານ ກ່ຽວກັບ:

- ການປະຕິບັດຕາມຂໍ້ຕົກລົງ ກ່ຽວກັບ ລາຄານ້ຳປະປາສະເລ່ຍ;
- ການບັນລຸຄາດໝາຍສູ້ຊົນທີ່ໄດ້ວາງເປັນເງື່ອນໄຂ ສຳລັບ ການດັດປັບລາຄານ້ຳປະປາ;

- ຄວາມເພິ່ງພໍໃຈ ຂອງຜູ້ໃຊ້ບໍລິການນໍ້າປະປາ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 34 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ກ່ຽວກັບ ນໍ້າປະປາ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ;
2. ດຳເນີນການຄວບຄຸມ, ກວດກາ ວຽກງານນໍ້າປະປາ ຂອງລັດວິສາຫະກິດນໍ້າປະປາ, ວິສາຫະກິດນໍ້າປະປາເອກະຊົນ ແລະ ວິສາຫະກິດນໍ້າປະປາແບບຮ່ວມຮຸ້ນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມື ໂດຍບໍ່ມີເຫດຜົນພຽງພໍ ແກ່ການດຳເນີນກິດຈະການວຽກງານນໍ້າປະປາ;
4. ສົມຮູ້ຮ່ວມຄິດໃຫ້ ຫຼື ຮັບເອົາສິນບົນ ໃນການດຳເນີນກິດຈະການນໍ້າປະປາ;
5. ທຳລາຍປ່າໄມ້ ແລະ ຂຸດຄົ້ນແຮ່ທາດ ຢູ່ບໍລິເວນເຂດສະຫງວນແຫຼ່ງນໍ້າທຳມະຊາດທີ່ໄດ້ກຳນົດໄວ້ເພື່ອການຜະລິດນໍ້າປະປາ;
6. ມີການກະທຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງຂະແໜງນໍ້າປະປາ.

### ມາດຕາ 35 ຂໍ້ຫ້າມ ສຳລັບ ຜູ້ບໍລິການ

ຫ້າມຜູ້ບໍລິການນໍ້າປະປາ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບພະນັກງານ, ເຈົ້າໜ້າທີ່ກ່ຽວຂ້ອງກັບການຜະລິດນໍ້າປະປາ ທີ່ບໍ່ໄດ້ມາດຕາຖານສະໜອງໃຫ້ຜູ້ບໍລິໂພກ;
2. ຂະຫຍາຍພື້ນທີ່ບໍລິການນໍ້າປະປາ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ;
3. ກົດໜ່ວງຖ່ວງດຶງ ກ່ຽວກັບ ວິທີການ ແລະ ມາດຕະການແກ້ໄຂບັນຫາທີ່ເກີດຂຶ້ນ ກັບ ວຽກງານນໍ້າປະປາ;
4. ດັດປັບລາຄານໍ້າປະປາ ໂດຍບໍ່ມີການປຶກສາຫາລືຈາກ ອົງການຄຸ້ມຄອງ ແລະ ກວດກາວຽກງານນະໂຍບາຍລາຄານໍ້າປະປາ ແລະ ອຳນາດການປົກຄອງທ້ອງຖິ່ນ;
5. ສະໜອງນໍ້າປະປາ ທີ່ບໍ່ໄດ້ມາດຕະຖານ ແລະ ສິ່ງຜົນກະທົບຕໍ່ຊີວິດການເປັນຢູ່ ຂອງຜູ້ບໍລິໂພກ;
6. ເມີນເສີຍຕໍ່ການຕິດຕາມ, ກວດກາ ແລະ ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 36 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານວິຊາການໃຫ້ຜູ້ບໍລິການນໍ້າປະປາ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ປະລະໜ້າທີ່, ເມີນເສີຍ, ບໍ່ປະຕິບັດຕາມຄຳສັ່ງຂອງຂັ້ນເທິງ;
3. ຮັບສິນບົນ, ສວຍໃຊ້ສິດອຳນາດ, ໜ້າທີ່ຕຳແໜ່ງ ເພື່ອຊອກຫາຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

4. ໃຊ້ສິດ, ໜ້າທີ່ຕໍາແໜ່ງ ເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ໃຊ້ກິລິຍາ, ມາລະຍາດ ທີ່ບໍ່ເໝາະສົມ ໃນການປະຕິບັດໜ້າທີ່;
6. ເປີດເຜີຍ, ສົມຮູ້ຮ່ວມຄິດ, ປອມແປງ ເອກະສານ ແລະ ຂໍ້ມູນທີ່ເປັນຄວາມລັບກ່ຽວກັບວຽກງານນະໂຍບາຍລາຄານໍ້າປະປາ;
7. ປົກປັງ ແລະ ບິດເບືອນ ຂໍ້ມູນ ກ່ຽວກັບວຽກງານນະໂຍບາຍລາຄານໍ້າປະປາ ຕໍ່ຂັ້ນເທິງ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາ ວຽກງານນະໂຍບາຍລາຄານໍ້າປະປາ

### ມາດຕາ 37 ອົງການຄຸ້ມຄອງ ແລະ ກວດກາວຽກງານນະໂຍບາຍລາຄານໍ້າປະປາ

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ການຄຸ້ມຄອງ ແລະ ກວດກາວຽກງານນະໂຍບາຍລາຄານໍ້າປະປາ ແລະ ເປັນເຈົ້າການປະສານສົມທົບກັບ ບັນດາ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານນະໂຍບາຍລາຄານໍ້າປະປາ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ຄະນະກໍາມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ;
3. ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ;
4. ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ.

### ມາດຕາ 38 ສິດ ແລະ ໜ້າທີ່ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ

ໃນການຄຸ້ມຄອງວຽກງານນະໂຍບາຍລາຄານໍ້າປະປາ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ກົດໝາຍ, ລະບຽບການ ກ່ຽວກັບການຄຸ້ມຄອງວຽກງານນະໂຍບາຍລາຄານໍ້າປະປາ;
2. ໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງວຽກງານນະໂຍບາຍລາຄານໍ້າປະປາ ໃນຂອບເຂດທົ່ວປະເທດ;
3. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງວຽກງານນະໂຍບາຍລາຄານໍ້າປະປາ ຢ່າງເປັນປົກກະຕິ;
4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 39 ສິດ ແລະ ໜ້າທີ່ ຂອງຄະນະກໍາມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ

ຄະນະກໍາມະການດັດສົມທຸລະກິດນໍ້າປະປາ ແລະ ສຸຂາພິບານ ມີສິດ ແລະ ໜ້າທີ່ ໃນການປະສານສົມທົບ ກັບ ອົງການຄຸ້ມຄອງ ແລະ ກວດກາວຽກງານນະໂຍບາຍລາຄານໍ້າປະປາ, ຂະແໜງ ການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 40 ສິດ ແລະ ໜ້າທີ່ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ.

ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງວຽກງານນະໂຍບາຍລາຄານ້ຳປະປາ;
2. ໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງວຽກງານນະໂຍບາຍລາຄານ້ຳປະປາ ພາຍໃນ ແຂວງ, ນະຄອນຫຼວງວຽງຈັນ;
3. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງວຽກງານນະໂຍບາຍລາຄານ້ຳປະປາ ໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງ ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ.**

ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງວຽກງານນະໂຍບາຍລາຄານ້ຳປະປາ;
2. ໂຄສະນາເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງວຽກງານນະໂຍບາຍລາຄານ້ຳປະປາ ພາຍໃນ ເມືອງ, ເທດສະບານ, ນະຄອນ;
3. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງວຽກງານນະໂຍບາຍລາຄານ້ຳປະປາ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງວຽງຈັນ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາວຽກງານນະໂຍບາຍລາຄານ້ຳປະປາ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 43 ເນື້ອໃນການກວດກາ**

ການກວດກາ ວຽກງານນະໂຍບາຍລາຄານ້ຳປະປາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍລາຄານ້ຳປະປາ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກັບວຽກງານນະໂຍບາຍລາຄານ້ຳປະປາ;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານນະໂຍບາຍລາຄານ້ຳປະປາ;
4. ການດຳເນີນທຸລະກິດ ກ່ຽວກັບ ການບໍລິການນ້ຳປະປາ.

**ມາດຕາ 44 ຮູບການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍທີ່ບໍ່ໄດ້ແຈ້ງຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 45 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງ ປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 46 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 47 ການຈັດຕັ້ງປະຕິບັດ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 48 ຜົນສັກສິດ**

ດຳລັດສະບັບນີ້ມີ ຜົນສັກສິດ ພາຍຫຼັງ ນາຍົກລັດຖະມົນຕີ ລົງລາຍເຊັນ, ໄດ້ລົງຈົດໝາຍເຫດທາງລັດຖະການ ແລະ ໃຫ້ມີຜົນຈັດຕັ້ງປະຕິບັດ ໃນວັນທີ 12 ທັນວາ 2022 ເປັນຕົ້ນໄປ.

ດຳລັດສະບັບນີ້ໃຊ້ປ່ຽນແທນ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກ່ຽວກັບນະໂຍບາຍລາຄານ້ຳປະປາ ຂອງ ສປປ ລາວ ສະບັບເລກທີ 5536/ຄຂປກ, ລົງວັນທີ 26 ເມສາ 2004.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ